Lao

A joint Australian Government &
State/Territory Health initiative



# ຄັ້ງສຸດທ້າຍທີ່ທ່ານ ໄປກວດແພັບ ສເມັຍນັ້ນດົນປານໃດແລ້ວ?

ເຮົາສາມາດປ້ອງກັນມະເຮັງປາກມົດລູກສ່ວນໃຫຍ່ໄດ້ ຖ້າວ່າແມ່ຍິງແຕ່ລະຄົນໄປກວດແພັບສ໌ເມັຍ (ກວດມະເຮັງມົດລູກ) ທຸກໆສອງປີ.

**National Cervical Screening Program**

DON'T MAKE EXCUSES, MAKE AN APPOINTMENT

## ແພັບສ໌ເມັຍແມ່ນຫຍັງ?

ແພັບສເມັຍແມ່ນວິທີການກວດແບບງ່າຍໆ ເພື່ອກວດເບິ່ງສຸຂພາບຂອງມົດລູກ (ປາກມົດລູກ).ການກວດນີ້ ໃຊ້ເວລາແຕ່ພຽງສອງສາມນາທີ ແລະ ບໍ່ເຈັບປວດແຕ່ຢ່າງໃດ.ການກວດດັ່ງກ່າວແມ່ນວິທີທີ່ດີທີ່ສຸດໃນການຄົ້ນຫາ ແລະ ປ້ອງກັນ ມະເຮັງປາກມົດລູກ.

## ເປັນຫຍັງຈຶ່ງຕ້ອງກວດແພັບສ໌ເມັຍ?

ແພັບສ໌ເມັຍສາມາດສະແດງໃຫ້ເຫັນອາການແຕ່ແຮກເລີ້ມຂອງມະເຮັງປາກມົດລູກ. ປາກມົດລູກ ແມ່ນຢູ່ທາງໃນຊ່ອງຄອດຂອງທ່ານ ແລະ ແມ່ນທາງເປີດ ເຂົ້າໄປຫາພົກມົດລູກ.

ບາງເທື່ອ ເຊລ໌ນ້ອຍໆໃນມົດລູກຂາດເກີດມີການປ່ຽນແປງຂຶ້ນ ໂດຍທີ່ເຊລ໌ຊຶ່ງມີສຸຂພາບດີຢູ່ນັ້ນກັບກາຍມາມີອາການທີ່ບໍ່ດີຂຶ້ນ(ຜິດປົກກະຕິ) ກໍເປັນໄດ້. ອາການດັ່ງກ່າວອາດເກີດຂຶ້ນໄດ້ໂດຍທີ່ທ່ານບໍ່ຮູ້ສຶກຕົວເລີຍ. ທ່ານໝໍປິ່ນປົວເຊລ໌ທີ່ຜິດປົກກະຕິເຫລົ່ານັ້ນ ກ່ອນທີ່ມັນຈະກັບກາຍເປັນໂຣກມະເຮັງ.




ມະເຮັງປາກມົດລູກ ຊນິດທີ່ເປັນກັນຫຼາຍທີ່ສຸດນັ້ນ ສາມາດປ້ອງກັນໄດ້ຮອດ **90%** ຖ້າວ່າ ເຮົາຄົ້ນພົບການປ່ຽນແປງຂອງເຊລ໌ແຕ່ຕົ້ນ ແລະ ປິ່ນປົວທັນເວລາ

## ໃຜແດ່ຕ້ອງກວດແພັບສ໌ເມັຍ?

ຖ້າທ່ານເຄີຍຮ່ວມເພດມາກ່ອນ ທ່ານຕ້ອງກວດແພັບສ໌ເມັຍທຸກໆສອງປີ.

ແມ່ຍິງທຸກຄົນຕ້ອງກວດແພັບສ໌ເມັຍຢ່າງສມ່ຳສເມີ,ຈົນອາຍຸຮອດ 70 ປີ.

## ກວດແພັບສ໌ເມັຍແມ່ນກວດແບບໃດ?






## ການກວດມີວິທີການດັ່ງນີ້...

ກ່ອນອື່ນໝົດ ທ່ານໝໍຈະບອກໃຫ້ທ່ານແກ້ເຄື່ອງນຸ່ງຈາກສ່ວນແອວລົງໄປ ແລະ ນອນຫງາຍເພື່ອຮັບການກວດ. ທ່ານສາມາດຂໍເອົາທ່ານໝໍ ແມ່ຍິງໄດ້.

ຫລັງຈາກນັ້ນ ທ່ານໝໍກໍຈະໃຊ້ຄີມປາກເປັດ (ຊຶ່ງແມ່ນເຄື່ອງມືແພດຊນິດນຶ່ງ) ເພື່ອເປີດປາກຊ່ອງຄອດ.

ຈາກນັ້ນເພີ່ນຈະໃຊ້ແປງນ້ອຍໆ ຫລື ໄມ້ດ້າມນ້ອຍໆ (ເຄື່ອງມືແພດເປັນດ້າມນ້ອຍໆຊຶ່ງເຮັດດ້ວຍພລາສຕິກ ຫລື ໄມ້) ຕ້ອຍເອົາເຊລ໌ ຈຳນວນນຶ່ງຢ່າງເບົາໆ ຈາກປາກມົດລູກ.

ທ່ານໝໍຈະເອົາເຊລ໌ເຫລົ່ານັ້ນ ຕ້ອຍໃສ່ໄວ້ເທິງແຜ່ນແກ້ວ ແລະ ສົ່ງໄປຫາຫ້ອງທົດລອງເພື່ອກວດເບິ່ງໂດຍໃຊ້ກ້ອງຈຸລທັດ.



## ຈະເຮັດຢ່າງໃດກັບຜົນການກວດ?

ເວລາທ່ານກວດແພັບສ໌ເມັຍ ເປັນສິ່ງສຳຄັນທີ່ທ່ານຕ້ອງຖາມທ່ານໝໍເບິ່ງວ່າ ອີກດົນປານໃດ ຈຶ່ງຈະຮູ້ຜົນການກວດ ແລະ ຈະຮູ້ຜົນການກວດໄດ້ຢ່າງໃດ.

**ຜົນການກວດສ່ວນໃຫຍ່ແມ່ນບໍ່ມີຫຍັງຜິດປົກກະຕິ.**

## ຖ້າວ່າຜົນການກວດສະແດງວ່າ ຜິດປົກກະຕິເດ ຈະເກີດຫຍັງຂຶ້ນ?

ຖ້າຜົນການກວດຂອງທ່ານອອກມາວ່າ ຜິດປົກກະຕິ ກໍບໍ່ໄດ້ໝາຍຄວາມວ່າ ທ່ານເປັນມະເຮັງ.

ອາດໝາຍຄວາມວ່າທ່ານມີອາການບາງຢ່າງທີ່ບໍ່ຮ້າຍແຮງ ຊຶ່ງທ່ານໝໍສາມາດປິ່ນປົວໄດ້.

ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ປຶກສາກັບທ່ານໝໍຂອງທ່ານວ່າ ຜົນການກວດນັ້ນໝາຍຄວາມວ່າແນວໃດ ແລະ ທ່ານຈະໄດ້ຮັບການປິ່ນປົວແບບໃດແດ່?

## ຫລັງຈາກນັ້ນຈະເກີດຫຍັງຂຶ້ນ?

ບາງເທື່ອ ແມ່ຍິງອາດຈະຕ້ອງໄດ້ກວດແພັບສ໌ເມັຍຖີ່ຂຶ້ນ. ແມ່ຍິງບາງຄົນອາດຈຳເປັນຕ້ອງໄດ້ໄປຫາທ່ານໝໍຊ່ຽວຊານສະເພາະ, ຖ້າເຊລ໌ມີອາການທີ່ສຸຂພາບບໍ່ຄ່ອຍດີ ທ່ານໝໍກໍຈະສາມາດປິ່ນປົວໄດ້ທັນເວລາ.

ໃຫ້ແນ່ໃຈວ່າ ທ່ານໄດ້ປຶກສາກັບທ່ານໝໍຂອງທ່ານວ່າ ວິທີປິ່ນປົວແບບໃດທີ່ດີທີ່ສຸດຕໍ່ຕົວທ່ານ.

## ຕອນນີ້ ຂ້ອຍໝົດປະຈຳເດືອນແລ້ວ ຂ້ອຍກໍຍັງຕ້ອງກວດແພັບສ໌ເມັຍຢູ່ບໍ?

ແມ່ນແລ້ວ ທ່ານຕ້ອງໄດ້ກວດ ເພາະວ່າເປີເຊັນທີ່ຈະເປັນມະເຮັງປາກມົດລູກສູງຂຶ້ນຕາມອາຍຸ ສະນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຕ້ອງໄດ້ສືບຕໍ່ກວດແພັບສ໌ເມັຍທຸກໆສອງປີ ເຖິງແມ່ນວ່າຈະໝົດປະຈຳເດືອນແລ້ວກໍຕາມ.

## ຂ້ອຍໄດ້ເຮັດໝັນແລ້ວ (ຜ່າເອົາມົດລູກອອກ) ຂ້ອຍກໍຍັງຕ້ອງໄດ້ກວດແພັບສ໌ເມັຍຢູ່ບໍ?

ທ່ານອາດຈະຍັງຕ້ອງໄດ້ກວດແພັບສ໌ເມັຍອີກຢູ່.
ຂໍໃຫ້ປຶກສາກັບທ່ານໝໍຂອງທ່ານເບິ່ງ.

## ຂ້ອຍໄດ້ສັງເກດເຫັນວ່າ ຂ້ອຍມີເລືອດອອກ (ເລືອດອອກທີ່ບໍ່ປົກກະຕິ)

ຖ້າທ່ານມີເລືອດອອກບໍ່ປົກກະຕິ ຫລື ມີຫນອງໄຫລອອກມາຈາກຊ່ອງຄອດ, ໃຫ້ໄປຫາທ່ານໝໍໂດຍດ່ວນທີ່ສຸດ.

## ຈະຕ້ອງເສັຍເງິນຫລາຍປານໃດເປັນຄ່າກວດແພັບສ໌ເມັຍ?

ທ່ານໝໍບາງຄົນ, ຄລີນິກ ແລະ ສູນສຸຂພາບບາງແຫ່ງ ກວດແພັບສ໌ເມັຍໃຫ້ທ່ານໂດຍບໍ່ຄິດຄ່າແຕ່ຢ່າງໃດ. ບາງບ່ອນກໍເກັບເງິນ. ໃຫ້ຖາມເບິ່ງຄ່າບໍຣິການກ່ອນເຮັດນັດພົບ. ໃຫ້ເລືອກໃຊ້ບໍຣິການກັບຜູ້ທີ່ໃຫ້ຄວາມສະດວກແກ່ທ່ານ ແລະ ບໍ່ເກັບຄ່າແພງ.

## ຂ້ອຍຈື່ບໍ່ໄດ້ວ່າ ຂ້ອຍກວດແພັບສ໌ເມັຍເທື່ອສຸດທ້າຍດົນປານໃດແລ້ວ?

ທ່ານໝໍ ຫລື ຄລີນິກສຸຂພາບທີ່ທ່ານເຄີຍໄປຫາ ອາດມີລະບົບເຕືອນກໍໄດ້ ເມື່ອເຖິງເວລາກວດແພັບສ໌ເມັຍຂອງທ່ານຄັ້ງຕໍ່ໄປ.

ທຸກໆຣັດ ມີລະບົບລົງທະບຽນຊຶ່ງເປັນບ່ອນທີ່ເກັບຜົນການກວດຂອງທ່ານໄວ້. ຂໍ້ມູນກ່ຽວກັບຜົນການກວດ ໄດ້ຖືກເກັບໄວ້ເປັນຄວາມລັບຊຶ່ງເປັນຜົນບັງຄັບທາງກົດໝາຍ.

ຫນ່ວຍທະບຽນນີ້ ຈະເຮັດຫນ້າທີ່ເປັນຜູ້ເຕືອນທ່ານ ຖ້າກາຍກຳນົດຍາມກວດແພັບສ໌ເມັຍຂອງທ່ານແລ້ວ ຫລື ກາຍຍາມທີ່ທ່ານຕ້ອງໄປຮັບການປິ່ນປົວຫລັງຈາກກວດແລ້ວ.

ຖ້າທ່ານບໍ່ຕ້ອງການໃຫ້ຂໍ້ມູນກ່ຽວກັບຕົວທ່ານ ຖືກເກັບໄວ້ໃນຫນ່ວຍທະບຽນກໍໄດ້ ແລະ ໃຫ້ບອກຈຸດປະສົງໃຫ້ທ່ານໝໍຂອງທ່ານຊາບ.

## ຂ້ອຍຈະໄປກວດແພັບສ໌ເມັຍໄດ້ຢູ່ໃສ?

ແມ່ຍິງບາງຄົນຮູ້ສຶກອາຍ ບໍ່ຢາກກວດແພັບສ໌ເມັຍ. ການເລືອກຄົນກວດ ແລະ ສະຖານທີ່ຊຶ່ງທ່ານຮູ້ສຶກສະບາຍໃຈ ອາດຊ່ວຍໄດ້. ທ່ານສາມາດເຮັດນັດພົບເພື່ອກວດກັບ ທ່ານໝໍຂອງທ່ານ, ນາງພຍາບານ ຫລື ຄລີນິກວາງແຜນຄອບຄົວ ໃນເຂດທ້ອງຖິ່ນຂອງທ່ານ. ທ່ານສາມາດຂໍເອົາທ່ານໝໍຜູ້ຍິງກວດແພັບສເມັຍໃຫ້ທ່ານໄດ້.

ຖ້າທ່ານຕ້ອງການຜູ້ແປພາສາໃນມື້ກວດນັ້ນ ກໍຂໍໃຫ້ບອກເຂົາເຈົ້າຮູ້ຕອນທ່ານເຮັດນັດພົບ.

ຖ້າທ່ານຕ້ອງການລາຍລະອຽດເພີ້ມຕື່ມກ່ຽວກັບເຣື່ອງການປ້ອງກັນໂຣກມະເຮັງປາກມົດລູກ, ກໍໃຫ້ໂທຣະສັບຫາເບີ **13 15 56** (ໂດຍເສັຍຄ່າ ໂທຣະສັບທັມມະດາ ແບບໂທຣໃນທ້ອງຖິ່ນ).

ຖ້າທ່ານມີບັນຫາເຣື່ອງປາກພາສາອັງກິດບໍ່ໄດ້ດີ ຂໍໃຫ້ໂທຣະສັບຫາຫນ່ວຍບໍຣິການແປເອກກະສານ ແລະ ແປພາສາ ເບີ **13 14 50** ເພື່ອຂໍໃຫ້ເຂົາໂທຣຊ່ວຍ, ການໂທຣເບີນີ້ ກໍເສັຍເທົ່າກັບຣາຄາໂທຣທັມມະດາ ໃນເຂດທ້ອງຖິ່ນເຊັ່ນກັນ.

**www.cervicalscreen.health.gov.au**

A joint Australian Government &
State/Territory Health initiative